ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດຖະນາຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້

ກອງສົ່ງເສີມ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ

**ຂໍ້ແນະນຳ**

# ເຕັກນິກການປູກລຳໄຍ ເງິນລ້ານ

[ສະໜັບສະໜູນໂດຍ]

[ໂຄງການສົ່ງເສີມ ກະສິກຳ LEAP]

[Laos Extension for Agriculture Project]

[Date ]

# ສາລະບານ


ປັດໃຈການຜະລິດ ແລະ ການປະຕິບັດດູແລຮັກສາ ____ 3

ສະພາບດິນຟ້າອາກາດທີ່ເໝາະສົມ ____ 3

ວິທີການປູກລຳໄຍ ____ 4

ການປະຕິບັດຫຼັງຈາກປູກ ____ 4

ຂັ້ນຕອນການຕັດກິ່ງງ່າ ____ 5

ລັກສະນະພຶດສາສາດ ແລະ ສາຍພັນລຳໄຍ ____ 5

ລັກສະນະພຶດສາສາດ ____ 6

ການຈັດການປຸ໋ຍ ແລະ ນ້ຳໃນລຳໄຍ ____ 6

ການໃຫ້ປຸ໋ຍທາງໃບຂອງລຳໄຍ ____ 8

ໂຣກ / ພະຍາດ ຂອງລຳໄຍ ____ 9

ໂຣກຈຸດສີນ້ຳຕານ (Alqal Spot) ____ 9



NAFES

ໜ່ວຍງານ ຝຶກອົບຮົມສົ່ງເສີມ

P.O. Box 811, Vientiane Lao P.D.R.
Tel / Fax: 021 - 740252

Training and Development Unit

Acc. No.: 03 AUG 2007 | Call No.: 1131

## ປັດໃຈການຜະລິດ ແລະ ການປະຕິບັດດູແລຮັກສາ

**ສະພາບດິນຟ້າອາກາດທີ່ເໝາະສົມ**

- **ດິນ:** ໂດຍທົ່ວໄປ ຄວນເປັນດິນທີ່ມີຄວາມອຸດົມສົມບູນສູງ ແລະ ລະບາຍນ້ຳໄດ້ດີ ເນື່ອງຈາກເປັນແຫຼ່ງທີ່ມີທາດອາຫານທີ່ຈຳເປັນຕໍ່ການຈະເລີນເຕີບໂຕ ແລະ ອອກດອກຕິດໝາກ ເຊັ່ນ ດິນຕະກອນ ຫຼືດິນນ້ຳໄຫຼ (Alluvial Soil) ຊຶ່ງເປັນດິນທີ່ມີໜ້າດິນລຶກ ເກີດຈາກການທັບຖົມຂອງຕະກອນດິນທີ່ໄດ້ ຈາກການຖືກນ້ຳທ້ວມ ດິນຊະນິດນີ້ຈະພົບຫຼາຍໃນບໍລິເວນແມ່ນ້ຳສາຍໃຫຍ່ໆ ເຊັ່ນ ແມ່ນ້ຳຂອງເປັນຕົ້ນ ຈະສັງເກດເຫັນວ່າບໍລິເວນລຸ່ມນ້ຳເຫຼົ່ານີ້ຈະປູກລຳໄຍໄດ້ຜົນດີ ຊຶ່ງບໍ່ຕ້ອງການປຸ໋ຍເລີຍກໍຍັງໄດ້ ແຕ່ໃນປະຈຸບັນ ການຜະລິດລຳໄຍກໍນຳໃຊ້ປຸ໋ຍເຄມີເຂົ້າຊ່ວຍອີກທາງໜຶ່ງເຊັ່ນກັນ.
- **ນ້ຳ:** ການປູກລຳໄຍຈຳເປັນຕ້ອງມີນ້ຳຊົນລະປະທານເຂົ້າຊ່ວຍໂດຍສະເພາະ ໃນຊ່ວງຫຼັງອອກດອກ ແລະ ຕິດໝາກອ່ອນໃນເດືອນ ມັງກອນ (1) ຫາ ເດືອນ ເມສາ (4) ໄລຍະທີ່ຕິດໝາກອ່ອນນີ້ຈຳເປັນຕ້ອງໃສ່ປຸ໋ຍທາງດິນ 1 ຄັ້ງ ດັ່ງນັ້ນດິນຈຶ່ງຕ້ອງມີຄວາມຊຸ່ມພຽງພໍ ເພື່ອລະລາຍປຸ໋ຍໃຫ້ຮາກໄດ້ດູດຊຶມເຂົ້າສູ່ລຳຕົ້ນໄປຫາໃບ ແລະ ຜ່ານຂະບວນການສັງເຄາະແສງ ແລະ ສົ່ງອາຫານໄປຫາໝາກອ່ອນໄດ້ ຫຼັງຈາກນັ້ນຈຶ່ງອາໃສນ້ຳຝົນຈາກເດືອນພຶດສາພາ (5) ຈົນເຖິງເດືອນ ສິງຫາ (8) ຊຶ່ງເປັນຊ່ວງການເກັບກ່ຽວ.
- **ອຸນຫະພູມ:** ນັບເປັນປັດໃຈທີ່ມີຄວາມສຳຄັນບໍ່ໜ້ອຍກວ່າທາດອາຫານ ແລະ ນ້ຳ ເນື່ອງຈາກຊ່ວງກ່ອນອອກດອກນັ້ນລຳໄຍຈຳເປັນຕ້ອງຜ່ານຄວາມໜາວເຢັນ ເພື່ອຊ່ວຍໃຫ້ລຳໄຍໃຫ້ເກີດຕາດອກ ອຸນຫະພູມໃນຊ່ວງນັ້ນຢູ່ລະຫວ່າງ 10 - 15 ອົງສາເຊ ດົນເຖິງ 1 - 2 ເດືອນ (ເດືອນພະຈິກ ຫາ ເດືອນທັນວາ) ແລະ ມັກພົບເລື້ອຍວ່າມີອຸນຫະພູມສູງຂື້ນມາ ແລະ ມີຝົນ ໃນລະຫວ່າງນີ້ເປັນບາງຊ່ວງ ໃນຊ່ວງນີ້ລຳໄຍເຮັດໃຫ້ລຳໄຍທີ່ພັກຕົວມາໄດ້ໄລຍະໜຶ່ງແຕກໃບອ່ອນອອກມາເປັນຈຳນວນຫຼາຍ ຫາກບໍ່ມີການຈັດການທຳລາຍໃບອ່ອນດັ່ງກ່າວຖິ້ມໄປ ໃບກໍ່ຈະແກ່ບໍ່ທັນອອກດອກໃນປີນັ້ນເຮັດໃຫ້ລຳໄຍເວັ້ນປີໄດ້.
- **ການຂະຫຍາຍພັນ:** ການຂະຫຍາຍພັນລຳໄຍໄດ້ຫຼາຍວິທີໄດ້ແກ່:
  1. **ວິທີການປູກດ້ວຍເມັດ:** ວິທີນີ້ຊາວກະສິກອນທົ່ວໄປບໍ່ນິຍົມ ເນື່ອງຈາກໃຫ້ໝາກຊ້າ ແລະ ໝາກທີ່ໄດ້ມັກບໍ່ມີຄຸນນະພາບ ຄື ເປັນໝາກນ້ອຍ ເນື້ອນ້ອຍ ເນື້ອແຫຼວ ແມ່ນຈະມີລັກສະນະໝາກດົກກໍ່ຈິງແຕ່ມີຄຸນນະພາບທາງການຄ້າ ແຕ່ວິທີນີ້ຍັງມີຄວາມຈຳເປັນຕໍ່ນັກປັບປຸງພັນເພາະຕ້ອງຄັດເລືອກລູກປະສົມຕ່າງໆຈະການປູກດ້ວຍເມັດ.
  2. **ວິທີຕິດຕາ ແລະ ສຽບຍອດ:** ເປັນວິທີທີ່ເພາະສົມກັບການປູກດ້ວຍເມັດໄວ້ກ່ອນແລ້ວໃນແປງປູກ ເພື່ອຈະໄດ້ບໍ່ກະທົບກະເທືອນກັບຮາກແກ້ວ ການເຮັດໃນເຮືອນປູກປູກຊຳນັ້ນນອກຈາກຈະເສຍເວລາກ້າເບ້ຍຈາກເມັດແລ້ວ ຕອນແຍກລົງຖົງປູກກໍຈຳເປັນຕ້ອງຕັດຮາກແກ້ວຖິ້ມໄປ ປູກໃນຖົງເມື່ອອາຍຸ 8 - 12 ເດືອນ ຈຶ່ງຈະປຽນຍອດໄດ້ ຫຼັງຈາກນັ້ນຕ້ອງຊຳໄວ້ອີກປະມານ 1 ປີ ຈຶ່ງນຳລົງປູກກໍຕ້ອງຕັດແຕ່ງຮາກອີກຄັ້ງໜຶ່ງບໍ່ເຊັ່ນນັ້ນຮາກຈະຄົດໄປມາຫຼາຍ ເມື່ອນຳໄປປູກແລ້ວເກີດ

**ອາການທີ່ເອີ້ນວ່າ:** ຮາກຂັດ ມີຜົນເຮັດໃຫ້ການຈະເລີນເຕີບໂຕຊ້າ ແລະ ປະສົບກັບບັນຫາເລື່ອງການໂຄ່ນລົ້ມຂອງຕົ້ນ.

3. **ວິທີການຕອນກິ່ງ:** ເປັນວິທີທີ່ນິຍົມຫຼາຍ ເປັນວິທີທີ່ນິຍົມກັນຫຼາຍເນື່ອງຈາກເຮັດໄດ້ງ່າຍໄດ້ຜົນດີ ແລະ ໃຊ້ເວລາໜ້ອຍພຽງປະມານ 45 - 60 ວັນ ກໍ່ສາມາດຕັດກິ່ງໄປຊໍາໄດ້ ແລະ ໄດ້ຂະໜາດຕາມທີ່ຕ້ອງການ. ຄວາມແຂງແຮງກໍ່ຂື້ນຢູ່ກັບກິ່ງທີ່ເລືອກ ຕ້ອງແຂງແຮງຫຼາຍໜ້ອຍພຽງໃດ ແລະ ເມື່ອນໍາມາຊໍາແລ້ວການປະຕິບັດດູແລຮັກສາໄດ້ດີສໍາໃດວິທີ ການຕອນນີ້ເຖີງກິ່ງຈະບໍ່ມີຮາກແກ້ວ ກໍ່ຕາມແຕ່ກໍ່ສາມາດອອກຮາກແມ່ນຈະບໍ່ໃຫຍ່ແຂງແຮງເທົ່າຮາກແກ້ວແຕ່ສາມາດຍັ່ງເລິກລົງດິນໄດ້ເຊັ່ນກັນ.

**ວິທີການປູກລໍາໄຍ**

1. **ໄລຍະປູກໂດຍທົ່ວໄປ:** ຈະປູກລໍາໄຍໄລຍະ 10 × 10 ແມັດ ຫຼື 8 × 8 ແມັດ. ລໍາໄຍເລີ້ມອອກດອກຕິດໝາກເມື່ອອາຍຸໄດ້ 3 - 4 ປີເຊິ່ງມີຂະໜາດເສັ້ນຜ່ານສູນກາງຊົງພຸ່ມພຽງປະມານ 2 - 3 ແມັດ ເທົ່ານັ້ນ ດັ່ງນັ້ນ, ຊ່ວງລໍາໄຍຕົວຍັງນ້ອຍຄວນປູກພືດລົ້ມລຸກຫຼືໄມ້ໃຫ້ໝາກຂະໜາດນ້ອຍກໍ່ໄດ້. ເພື່ອເປັນການສ້າງລາຍຮັບຍັງສາມາດກໍາຈັດວັດສະພືດໄປໃນຕົວດວ້ຍ. ເມື່ອມີການໃຫ້ປຸຍ ແລະ ນໍ້າກັບພືດແຊມລໍາໄຍກໍ່ຈະໄດ້ຮັບປຸຍ ແລະ ນໍ້ານັ້ນດວ້ຍໂດຍສະເພາະຖ້າມີການປູກພືດແຊມໃນລະດູແລ້ງ ແລະ ມີການໃຫ້ນໍ້າກັບພືດແຊມອີກດວ້ຍກໍ່ຍິ່ງຈະເຮັດໃຫ້ລໍາໄຍໄດ້ຮັບຄວາມຊຸ່ມຊື່ນ ເຊິ່ງມີຫົວຕໍ່ການຈະເລີນເຕີບໂຕຂອງລໍາໄຍໄດ້ດີຂື້ນ ນອກຈາກນັ້ນ ວັດສະພືດເລົ່ານັ້ນຍັງສາມາດນໍາມາເປັນປຸຍໄດ້ອີກດວ້ຍ.

2. **ການກຽມຂຸມປູກ:** ປົກກະຕິຂຸມຂະໜາດ 80 × 80 × 80 ຊມ ໂດຍປະມານແຕ່ວາດິນມີຄວາມອຸດົມສົມບູນຕໍ່າຈະຂຸດໃຫ້ຂຸມກວ້າງຂື້ນໃສ່ຝຸ່ນຄອກປະສົມກັບດິນອັດຕາສ່ວນ 1 : 1 ແລະ ໃສ່ຝຸ່ນຮອງກົ້ນຂຸມລະ 2 - 3 ກຼາມ. ນໍາດິນທີປະສົມກັບຝຸ່ນຄອກ ແລະ ຖົມຂຸມໃຫ້ສູງຈາກລະດັບໜ້າດິນຂື້ນ ປະມານ 15 - 20 ຊມ. ຄວນມີການຕັດຮາກກອ່ນປູກລືຟຂຸມຖ້າບໍ່ຕັດຈະເຮັດໃຫ້ການຈະເລີນເຕີບໂຕ ຂອງລໍາໄຍຊັກຊ້າ ແລະ ມີການໂຄນລົ້ມສູງຫຼັງຈາກນັ້ນເອົາລົງຂຸມ ແລະ ຝັງດິນໃຫ້ແໜ້ນສູງຈາກໜ້າດິນປົກກະຕິເລັກນອ້ຍ ທັງນີ້ ເພື່ອປອ້ງກັນນໍ້າຖວ້ມຂັງຫຼັງຈາກປູກເຖີງຢ່າງໃດກໍ່ຕາມຫຼັງຈາກຖົມດິນແລ້ວຕອ້ງທົດນໍ້າໃຫ້ປຽກ 1 ຄັ້ງ ເພື່ອໃຫ້ດິນຕິດກັບກະເປົາຊໍາຮາກຈະເລີກລົງສູ່ດິນໄດ້ສະດວກ.

**ການປະຕິບັດຫຼັງຈາກປູກ**

1. **ການປູກໄມ້ບັງລົມ (wind break)** ເນື່ອງຈາກວາມີປະສົບກັບບັນຫາຟ້າຝົນທີ່ເກີດຂື້ນໃນ 1 ຄັ້ງຕໍ່ປີຢ່າງໜ້ອຍເຊິ່ງຈະເກີດຂື້ນໃນຕົ້ນລະດູຝົນປີທີ່ໜຶ່ງ ເນື່ອງຈາກວ່າເປັນຊ່ວງບໍາໄຍຕິດໝາກຂະໜາດໃຫຍ່ພໍສົມຄວນແຕ່ຍັງເກັບກ່ຽວບໍ່ທັນໄດ້ ເຊິ່ງຈະເຮັດໃຫ້ສູນເສຍຜົນຜະລິດໃນປີໜຶ່ງບໍ່ແມ່ນໜ້ອຍທີ່ດຽວ ສະນັ້ນ ເພື່ອປອ້ງກັນໄວ້ລວງໜ້າ ຈຶ່ງຄວນຢ່າງຍິ່ງທີ່ຈະຕອ້ງປູກພືດບັງລົມຄວບຄູ່ກັບການປູກລໍາໄຍຕັ້ງແຕ່ປີທໍາອິດໄມ້ບັງລົມອາດເປັນໄມ້ໃຫ້ໝາກຊະນິດອື່ນທີ່ແຂງແຮງ. ແຕ່ມີຂໍ້ຄວນ

ລະວັງຄືຈະພົບຣາກ ແລະ ຣົມເງົາຂອງໄມ້ບັງລົມມາລົບກວນລຳໄຍຈຶ່ງຄວນປູກຮ່າງຈາກລຳໄຍ ປະມານ 10 - 20 ແມັດເປັນຢ່າງຕ່ຳ.

2. ການເຮັດຮົ່ມເງົາ: ໂລຍະທຳອິດຂອງການປູກຄວນບັງລົມພ້ສົມຄວນ ເນື່ອງຈາກຕົ້ນກ້າທີ່ຢູ່ໃນເຮືອນເພາະຊຳຍັງບໍ່ເຄີຍຊິນກັບແສງແດດ ດາຈະເຮັດໃຫ້ໃບແຮ້ງ ແລະ ລົ້ມໃດ້ແຕ່ຖ້າເປັນຕົ້ນກ້າທີ່ຢູ່ໃນກາງແຈ້ງຢູ່ແລ້ວກໍ່ບໍ່ຈຳ ເປັນຕອ້ງເຮັດຮົມເງົາ ຂໍແຕ່ມີຄວາມຊຸມຊື່ນທີ່ພໍພຽງເພາະຕົ້ນກ້າຊະນິດນີ້ທົນທານຕໍ່ແສງແດດຢູ່ແລ້ວ.

3. ການປູກພືດຄຸມດິນ: ພືດຄຸມດິນທີ່ໃຊ້ໂດຍທົ່ວໄປໃດ້ແກ່ພຽງພືດຕະກຸນຖົ່ວຕາ່ງໆ ທີ່ດັ່ງກາ່ວຈະຊວ່ຍເພີ້ມອິນຊີວັດຖຸໃນດິນ ແລະ ຮັກສາຄວາມຊຸ່ມຊື່ນປອ້ງກັນການສະລ້າງໃດ້ດີ. ກໍ່ລະນີທີ່ປູກໃນບໍລິເວນທີ່ລາກຊັບຫຼາຍແຕ່ ໃນພື້ນທີ່ຣາກພຽງມັກມີບັນຫາຫຼາຍ ກຣ່ວກັບຮາກຂອງພືດຄຸມດິນເຂົ້າໄປລົບກວນລະບົບຮາກຂອງລຳໄຍ. ແຕ່ພົບວ່າການປູກພືດຄຸມຈະເຮັດໃຫ້ການຈະເລີນເຕີບໂຕຂອງ ລຳໄຍ ຊ້າກວ່າການທີ່ແປງຕັດຫຍ້າ ແລະໄຖພວນດັ່ງນັ້ນຈຶ່ງຈຳເປັນທີ່ຈະຕອ້ງປູກພືດຄຸມໃຫ້ຮ່າງຈາກຊົງພຸ່ມຂອງລຳໄຍປະມານ 2 ແມັດເປັນຢ່າງນອ້ຍ.

4. ການສ້າງຊົງພຸ່ມຂອງລຳໄຍ: ການສ້າງຊົງພຸ່ມຂອງລຳໄຍໃຫ້ເປັນຕົ້ນຂື້ນໄປກ່ອນແລ້ວຈຶ່ງປະປ່ອຍໃຫ້ເກີດກິ່ງກ້ານເມື່ອສູງຈາກພື້ນດິນປະມານ 50 ຊມ. ເປັນສິ່ງທີ່ຄວນປະຕິບັດ ເພາະຈະເຮັດໃຫ້ກິ່ງກ້ານແຂງແຮງກວ່າທີ່ຈະປ່ອຍໃຫ້ເກີດກິ່ງກ້ານນອ້ຍຈາກໂຄນຕົ້ນ. ເຊິ່ງເປັນຫຼາຍໆກິ່ງນອ້ຍໆ. ເຊິ່ງມມີບັນຫາສີຫັກຂື້ນໃນພາຍຫຼັງ

## ຂັ້ນຕອນການຕັດກິ່ງງ່າ

ເມື່ອລຳໄຍຕັ້ງພຸ່ມແລ້ວກໍ່ເລີ້ມມີການຕັດກິ່ງງ່າໄດ້ແລ້ວ ໂດຍການຕັດກິ່ງນ້ອຍໆ ທີ່ຢູ່ໃນພຸ່ມທີ່ຕືບໜາອອກບາງ ເມື່ອລຳໄຍອອກດອກຕິດໝາກແລ້ວຈຳເປັນຕ້ອງມີການຕັດແຕ່ງກິ່ງພາຍຫຼັງເກັບກ່ຽວໝາກແລ້ວຄວນຕັດແຕ່ງໂດຍບັງຄັບບໍ່ໃຫ້ຊົງພຸ່ມມີຄວາມສູງຫຼາຍ ແຕ່ຈະລັຽງກິ່ງໃຫ້ແຜ່ອອກທາງດ້ານຂ້າງຈະດີກວ່າເພາະຈະສະດວກຕໍ່ການພົ່ນສານເຄມີ ແລະ ເກັບກ່ຽວຕໍ່ໄປ ແມ່ນວ່າອາດຕ້ອງໃຊ້ໄມ້ຄ້ຳແຕ່ກໍ່ເປັນໄມ້ຄ້ຳທີ່ສັ້ນໆທີ່ຫາໄດ້ງ່າຍຕາມທ້ອງຖິ່ນ ແລະ ມີລາຄາຖືກ ເພື່ອຫຼຸດຜ່ອນຕົ້ນທຶນໃນການຜະລິດໃຫ້ໄດຫຼາຍທີ່ສຸດເທົ່າທີ່ຈະເຮັດໄດ້ ໃນອານາຄົດ.

## ລັກສະນະພືດສາສາດ ແລະ ສາຍພັນລຳໄຍ

ລຳໄຍເປັນໄມ້ໃຫ້ໝາກເຂດຮ້ອນ ແລະ ເຄິ່ງເຂດຮ້ອນ ທີ່ມີລັກສະນະບາງຄ້າຍຄືກັບໝາກລີ້ນຈີ່ ແລະ ໝາກເງາະ ມີຊື່ວິທະຍາສາດວ່າ Euphoria Longana Lamk, Cambess or Dimocarpus Longan, Lour or Nephelium Longana, ຢູ່ໃນວົງຕະກຸນ Sapindaceae or Soapberry ຊຶ່ງມີພືດທີ່ຈັດຢູ່ໃນວົງຕະກຸນນີ້ເຖິງ 130 ສະກຸນ (Genus) ປະມານ 1,100 ຊະນິດ (Species).

**ລັກສະນະພຶດສາສາດ**

1. **ລຳຕົ້ນ:** ລຳໄຍເປັນໄມ້ໃຫ້ໝາກຍືນຕົ້ນ ທີ່ມີຊົງພຸ່ມແຜ່ກວ້າງຂະໜາດຂອງຊົງພຸ່ມມີຕັ້ງແຕ່ຂະໜາດກາງຈົນເຖິງຂະໜາດໃຫຍ່ຂຶ້ນຢູ່ກັບແນວພັນ ເມື່ອຈະເລີນເຕີບໂຕເຕັມທີລຳຕົ້ນຈະສູງປະມານ 10 - 20 ແມັດ ເນື້ອໄມ້ອ່ອນເຮັດໃຫ້ກິ່ງກ້ານຫັກງ່າຍ ເປືອກ ແລະ ລຳຕົ້ນບໍ່ລຽບ ແລະ ມີສີນ້ຳຕານ ຫຼື ສີເທົາ.
2. **ພາກສ່ວນໃບ:** ລັກສະນະຂອງໃບເປັນໃບຮ່ວມທີ່ປະກອບດ້ວຍໃບອ່ອນຢູ່ເທິງກ້ານໃບຮ່ວມກັນ **(Pinnately compound leaves)** ກ້ານໃບຮ່ວມຍາວປະມານ 4 - 6 ຊມ. ໃບຍ່ອຍມີ 2 - 5 ຄູ່ ແລະ ຈັດລຽນຕົວໃນລັກສະນະກົງກັນຂ້າມກັນ ຫຼື ສະລັບກັນ ຮູບຮ່າງໃບຍ່ອຍເປັນຮູບວີ ຫຼືຮູບຫອກ ກວ້າງ 3 - 6 ຊມ. ແລະ ຍາວ 7 - 15 ຊມ. ຂອບໃບລຽບ ແລະ ບໍ່ມ້ວນປາຍໃບ ຖານໃບຂ້ອນຊ້າປ້ານ ດ້ານຫຼັງໃບມີສີຂຽວເຂັ້ມກວ່າດ້ານທ້ອງໃບ ຜິວໃບດ້ານຫຼັງລຽບ ສ່ວນດ້ານທ້ອງໃບສາກເລັກນ້ອຍ.
3. **ຊໍ່ດອກ ແລະດອກ:** ຊໍ່ດອກລຳໄຍເປັນແບບ *compound dichasis* ຊຶ່ງມີການແຕກກ້ານດອກອອກເປັນງ່າຈາກກ້ານທີ່ແຕກ ແລະ ແຕ່ລະກ້ານງ່ານັ້ນຈະແຕກງ່າອີກຄັ້ງ ຊໍ່ດອກເກີດຈາກຕາດອກທີ່ບໍລິເວນປາຍກິ່ງ ແຕ່ບາງຄັ້ງກໍອາດຈະເລີນຕາຂ້າງຂອງກິ່ງໄດ້. ຄວາມຍາວຂອງຊໍ່ດອກປະມານ 20 - 50 ຊມ. ການຮຽງຕົວຂອງຊໍ່ດອກເປັນແບບ *panicle* ແລະ *thryse.*
4. **ພາກສ່ວນໝາກ:** ຈັດເປັນໝາກດ່ຽວທີ່ມີຮູບຮ່າງຂ້ອນຂ້າງກົມ ຫຼືຮູບໄຂ່ ເປືອກຂອງໝາກມີສີນ້ຳຕານອ່ອນ ຜິວຂອງເປືອກເປັນຕຸ່ມ ຫຼືເກືອບລຽບແລ້ວແຕ່ແນວພັນ ຂະໜາດຂອງໝາກແຕກຕ່າງກັນຕາມແນວພັນ ເນື້ອຂອງລຳໄຍພັທະນາມາຈາກກ້ານໄຂ່ ມີສີຂາວຄ້າຍວຸ້ນ ຂາວຂຸ້ນ ຫຼືສີຊົມພູ ຫຼື ແຕກຕ່າງກັນໄປລັກສະນະເນື້ອແສ່ ແຫ້ງ ກອບ ຫຼື ໜຽວ ຕະຫຼອດເຖິງລົດຊາດຈະແຕກຕ່າງກັນຕາມແນວພັນ.
5. **ພາກສ່ວນແກ່ນ:** ມີລັກສະນະກົມຈົນເຖິງກົມແບນ ເປືອກຫຸ້ມເມັດສີນ້ຳຕານເຂັ້ມ ຫຼືສີດຳເປັນມັນ ສ່ວນທີ່ຕິດກັບຂ້ອນເມັດເປັນວົງກົມສີຂາວທີ່ມີລັກສະນະນ້ອຍ ຫຼືໃຫຍ່ຕ່າງກັນຕາມແນວພັນ.

## ການຈັດການປຸ໋ຍ ແລະ ນ້ຳໃນລຳໄຍ

ລຳໄຍເປັນພືດທີ່ໃຊ້ໄລຍະເວລາໃນການໃຫ້ຜົນຜະລິດຍາວນານ ໂດຍນັບແຕ່ອອກດອກໃນເດືອນມັງກອນ (1) ຈົນເຖິງເດືອນສິງຫາ (8) ປະກອບກັບພາກເໜືອຝົນຈະໝົດໃນເດືອນຕຸລາ (10) ເຮັດໃຫ້ລຳໄຍມີເວລາໃນການຕຽມຕົ້ນ ສ້າງຄວາມສົມບູນໃຫ້ພ້ອມຕໍ່ການອອກດອກໃນປີຕໍ່ໄປພຽງ 3 ເດືອນເທົ່ານັ້ນ ນອກຈາກນັ້ນການສູນເສຍທາດອາຫານໄປກັບຜົນຜະລິດທີ່ຖືກເກັບກ່ຽວກໍເປັນສາເຫດໜຶ່ງ ທີ່ເຮັດໃຫ້ຄວາມສົມບູນຂອງຕົ້ນລົດນ້ອຍຖອຍລົງອີກດ້ວຍ ການຈັດການປຸ໋ຍ ແລະ ນ້ຳໃຫ້ຕົ້ນລຳໄຍມີຄວາມສົມບູນຢ່າງພຽງພໍ ແລະ ວ່ອງໄວທັນກັບເວລາເປັນແນວທາງທີ່ຕ້ອງຈັດຕັ້ງປະຕິບັດ **ອີກຢ່າງໜຶ່ງຕົ້ນລຳໄຍທີ່ຈະເລີນເຕີບໂຕເຕັມທີ່ຈຳມີລະບົບຮາກລຶກ** ປະມານ 1,5 ຫາ 2 ແມັດ ແລະ ປະລິມານ**ນ້ຳທີ່ເໝາະສົມສຳລັບລຳໄຍຄື 1,200 ມມ / ປີ ເຖິງ** ຢ່າງໃດກໍຕາມການຈັດການປຸ໋ຍ ແລະ ນ້ຳໃນລຳໄຍພໍ**ຈະແຍກການດຳເນີນການໄດ້ 2 ໄລຍະຄື:**

1. **ໄລຍະຕົ້ນລຳໄຍຍັງບໍ່ທັນມີຜົນຜະລິດ (ອາຍຸ 1 ຫາ 4 ປີ):** ໃນໄລຍະນີ້ຈຳເປັນຕ້ອງໃຫ້ອາຫານ ແລະ ທາດບຳລຸງເພື່ອເຮັດໃຫ້ຕົ້ນລຳໄຍໄດ້ມີການຈະເລີນເຕີບໂຕຢ່າງວ່ອງໄວ ທາງດ້ານຊົງພຸ່ມເສຍກ່ອນ. (1). ປີທີ 1, ຄວນໃສ່ປຸ໋ຍຄອກ 1 ປີບ ແລະ ເຄມີສູດ 15-15-15 ໃນອັດຕາ 100-150 ກຼາມ / ຕົ້ນ / ຄັ້ງ ໂດຍໃສ່ 3 ຄັ້ງໃນລະຫວ່າງເດືອນ ມັງກອນ ແລະ ເດືອນກັນຍາ ທຸກຄັ້ງທີ່ໃສ່ປຸ໋ຍເຄມີຄວນມີການຫົດນ້ຳຕາມ ເພື່ອບໍ່ໃຫ້ມີການສູນເສຍທາດອາຫານໂດຍສະເພາະໄນໂຕຣເຈນ ແຕ່ຫາກຫາກຫຼັງໃສ່ປຸ໋ຍເຄມີຝົນຕົກ ການຫົດນ້ຳກໍ່ບໍ່ຈຳເປັນ ຫຼັງຈາກນັ້ນກໍ່ຄວນມີການພອນດິນເປັນຂັ້ນຕອນສຸດທ້າຍຂອງໄລຍະນີ້ ແລະ ບໍ່ຈຳເປັນທີ່ຈະຈັດການໃດໆ ອີກເລີຍ ເພາະຈະເປັນການໄປລົບກວນລະບົບຮາກຂອງລຳໄຍຊຶ່ງກຳລັງຈະເລີນເຕີບໂຕໄດ້ຢ່າງດີໃຫ້ຢຸດສະງັກກໍ່ເປັນໄດ້. ສຳລັບການໃຫ້ນ້ຳປີທຳອິດຄວນໃຫ້ນ້ຳແກ່ລຳໄຍຢ່າງສະໝ່ຳສະເໝີ ເພື່ອໃຫ້ດິນມີຄວາມຊຸ່ມຊື່ນຢ່າງພຽງພໍ ແຕ່ຖ້າຫາກມີຝົນຕົກກໍບໍ່ຈຳເປັນຕ້ອງຫົດນ້ຳເພີ້ມເຕີມ ແຕ່ໃນກໍລະນີຫາກເກີດມີນ້ຳຂັງກໍຄວນລະບາຍນ້ຳອອກຈາກບໍລິເວນໂຄນຕົ້ນ. ສຳລັບສວນທີ່ມີບັນຫາໃນການຈັດຫານ້ຳ ຫຼືມີບໍ່ພຽງພໍທີ່ຈະໃຫ້ຕະຫຼອດໃນຕົ້ນລະດູແລ້ງ ຄວນລົດການໃຫ້ນ້ຳເພື່ອໃຫ້ລຳໄຍພັກຕົວຊ່ວງລະດູແລ້ງ ເພາະຖ້າໃຫ້ນ້ຳແກ່ຕົ້ນລຳໄຍບໍ່ສະໝ່ຳສະເໝີ ຫຼືບໍ່ພຽງພໍກໍອາດຈະເຮັດໃຫ້ຕົ້ນລຳໄຍຕາຍໄດ້. ຕະຫຼອດໄລຍະປີທຳອິດທີ່ປູກລຳໄຍນັ້ນ ບໍ່ຄວນລົບກວນບໍລິເວນໂຄນຕົ້ນຂອງລຳໄຍຖ້າບໍ່ຈຳເປແນຈິງໆ ດັ່ງນັ້ນ ການກຳຈັດວັດສະພືດບໍລິເວນໂຄນຕົ້ນບໍ່ຄວນໄຊ້ຈົກ ຊຶ່ງຈະເປັນອັດຕະລາຍຕໍ່ລະບົບຮາກຂອງລຳໄຍທີ່ກຳລັງຕັ້ງຕົວ ເຮັດໃຫ້ການດູດນ້ຳ ແລະ ທາດອາຫານຊະງັກໄປດ້ວຍ. (2). ປີທີ 2 - 4, ຄວນໃສ່ປຸ໋ຍຄອກໃນອັດຕາ 2-4 ປີບ / ຕົ້ນ ຕາມອາຍຸຂອງຕົ້ນລຳໄຍສຳລັບວິທີການໃສ່ນັ້ນສາມາດຫວ່ານໃສ່ບໍລິເວນລຸ່ມຂອງຊົງພຸ່ມກໍໄດ້ ແມ່ນວ່າຈະມີເສຍວັດສະພືດຄຸມຢູ່ກໍຕາມ ນອກຈາກນັ້ນການຫວ່ານປຸ໋ຍຄອກທັບເສຍວັດສະພືດເຫຼົ່ານີ້ຍັງເປັນການຊ່ວຍເລັ່ງໃຫ້ເສຍວັດສະພືດທີ່ປົກຄຸມຢູ່ ຍ່ອຍສະຫຼາຍກາຍເປັນອິນຊີວັດຖຸ ຊຶ່ງຈະເຮັດໃຫ້ບໍລິເວນດິນດັ່ງກ່າວມີຄວາມອຸດົມສົມບູນເພີ້ມຂື້ນທັງກາຍະພາບ ແລະ ທາງເຄມີອີກດ້ວຍ, ສວນປຸ໋ຍເຄມີນັ້ນຄວນໃສ່ສູດ 15-15-15 ໃນອັດຕາ 200 - 300 ກຼາມ ແລະ ປຸ໋ຍສູດ 46-0-0 ຫຼືຢູເຣຍ ໃນອັດຕາ 100 - 200 ກຼາມ / ຕົ້ນ / ຄັ້ງ ໂດຍໃສ່ 3 ຄັ້ງໃນລະຫວ່າງເດືອນ ພຶດສະພາ ກໍລະກົດ ແລະ ເດືອນກັນຍາ, ການໃສ່ສາມາດຫວ່ານໃສຊົງພຸ່ມ ຫຼືວິທີຂຸດໃສ່ເປັນຈຸດໆ ໂດຍຮອບຂອງຊົງພຸ່ມ ແລະ ຖົມ ຈາກນັ້ນຄວນຫົດນ້ຳຕາມທຸກຄັ້ງ ໃນກໍລະນີໃສ່ປຸ໋ຍດ້ວຍການຫວ່ານ, ສຳລັບການໃຫ້ນ້ຳໃຫ້ປະຕິບັດຕາມປີທຳອິດ.
2. **ໄລຍະຕົ້ນລຳໄຍໃຫ້ຜົນຜະລິດ (ອາຍຸ 5 ປີຂື້ນໄປ):** ການຈັດການປຸ໋ຍ ແລະ ນ້ຳໃນຊ່ວງນີ້ສາມາດແຍກອອກເປັນ 3 ໄລຍະຄື: (1). **ໄລຍະບຳລຸງຕົ້ນໃຫ້ການຈະເລີນເຕີບໂຕແລ້ວສົມບູນ:** ໃສ່ປຸ໋ຍເຄມີສູດ 15-15-15 ໃນອັດຕາ 2 - 3 ກິໂລກຼາມ / ຕົ້ນ ຕາມອາຍຸ ແລະ ຂະໜາດຂອງຊົງພຸ່ມ ຂຸດໃສ່ເປັນຈຸດໆ ບໍລິເວນຮອບຊົງພຸ່ມ ໃສ່ຊ່ວງກ່ອນການເກັບກ່ຽວ 2 ອາທິດ (ປະມານເດືອນ ສິງຫາ), ຫຼັງຈາກຂຸດຂຸມໃສ່ປຸ໋ຍແລ້ວ ບໍ່ຈຳເປັນຕ້ອງຫົດນ້ຳຕາມກໍ່ຕໍ່ເມືອເກັບກ່ຽວຜົນຜະລິດທີ່ອອກດອກຕິດຜົນໃນປີກ່ອນຮຽບຮ້ອຍແລ້ວ ກໍສາມາດຕັດກິ່ງງ່າໄດ້ທັນທີ ແລ້ວຈຶ່ງຫົດນ້ຳຢ່າງເຕັມທີ ໃສ່ປຸ໋ຍເຄມີອີກຄັ້ງໃນຊ່ວງທ້າຍເດືອນກັນຍາ ເຖິງຕົ້ນເດືອນຕຸລາ ໂດຍໃສ່ປຸ໋ຍສູດ 15-15-15 ໃນອັດຕາ 1 - 3ກິໂລກຼາມ / ຕົ້ນ ຮ່ວມກັບປຸ໋ຍສູດ 46-0-0 ຫຼືຢູເຣຍ ໃນອັດຕາ 1 - 2 ກິໂລກຼາມ / ຕົ້ນ ຕາມອາຍຸ ແລະ ຂະໜາດຂອງຊົງ

ພຸ່ມ ໂດຍຫວ່ານໃສ່ໃຫ້ທົ່ວຊົງພຸ່ມ ແລະ ຫົດນ້ຳຕາມ. ສຳລັບການໃກ້ນ້ຳໄລຍະນີ້ບໍ່ຈຳເປັນເພາະວ່າເປັນຊ່ວງລະດູຝົນ ແຕ່ຖ້າຝົນຫາກຖິ້ມຊ່ວງກໍຄວນຫົດນ້ຳເພື່ອໃຫ້ດິນມີຄວາມຊຸ່ມຊື່ນຢ່າງສະໝ່ຳສະເໝີ. (2). **ໄລຍະຕຽມຕົ້ນລຳໄຍໃຫ້ພ້ອມຕໍ່ການອອກດອກ:** ໄລຍະນີ້ຄວນໃສ່ປຸ໋ຍສູດ 8-24-24 ຫຼື 12-24-12 ໃນອັດຕາ 2 - 3 ກິໂລກຼາມ / ຕົ້ນ ໃສ່ໃນຊ່ວງທ້າຍເດືອນຕຸລາ ເຖິງຕົ້ນເດືອພະຈິກ ຫວ່ານໃສ່ໃຫ້ທົ່ວຊົງພຸ່ມ ແລະ ຫົດນ້ຳຕາມ. ການໃຫ້ນ້ຳໄລຍະນີ້ ຫາກຝົນເລີ້ມຖິ້ມຊ່ວງ ຄວນໃຫ້ນ້ຳຈົນເຖິງຕົ້ນເດືອນພະຈິກ ຈາກນັ້ນຄວນຢຸດໃຫ້ນ້ຳ. (3). **ໄລຍະອອກດອກຕິດໝາກ:** ຫຼັງຈາກລຳໄຍແທງຊໍ່ດອກ ແລະ ເລີ້ມດອກບານແລ້ວ ຈຶ່ງເລີ້ມໃຫ້ນ້ຳ ພ້ອມກັບໃສ່ວັດສະດຸຄຸມໂຄນຕົ້ນ ການເລີ້ມໃຫ້ນ້ຳຄັ້ງທຳອິດຄວນໃຫ້ພຽງເລັກນ້ອຍກ່ອນປະມານ 50 ລິດ ບໍລິເວນໂຄນຕົ້ນ ຈາກນັ້ນຈຶ່ງຄ່ອຍໆເພີ້ມປະລິມານນ້ຳຂື້ນເລື້ອຍໆຈົນເຕັມທີໃນອາທິດທີ 2 - 3 ຫຼັງຈາກໃຫ້ຄັ້ງທຳອິດແລ້ວ ຊຶ່ງໄລຍະນີ້ຈຳເປັຣຕ້ອງມີການໃຫ້ນ້ຳ ເພື່ອໃຫ້ດິນມີຄວາມຊຸ່ມຊື່ນທີ່ພຽງພໍຕະຫຼອດເວລາ ປະກອບກັບໃນຊ່ວງນີ້ເປັນລະດູແລ້ງ ຈຶ່ງຈຳເປັນຕ້ອງໃຫ້ນ້ຳຢ່າງສະໝ່ຳສະເໝີຢ່າງນ້ອຍອາທິດລະຄັ້ງ ເມືອໝາກມີຂະໜາດ 0,5 ມີລີແມັດ ໃຫ້ໃສ່ປຸ໋ຍສູດ 15-15-15 ໃນອັດຕາ 2 - 3 ກິໂລ / ຕົ້ນ ຫວ່ານໃຫ້ທົ່ວຊົງພຸ່ມ ແລະ ຫົດນ້ຳຕາມເມື່ອໝາກມີຂະໜາດ 1,2 ຊມ. ໃຊ້ສູດ 13-13-21 ໃນອັດຕາ 2 - 3 ກິໂລກຼາມ ຫວ່ານໃຫ້ທົ່ວຊົງພຸ່ມ ແລະ ຫົດນ້ຳຕາມ. ສຳລັບປຸ໋ຍດອກຄວນໃສ່ທຸກໆປີ ປີລະ 1 ຄັ້ງໃນອັດຕາ 5 - 10 ປິບ ຕາມອາຍຸ ແລະ ຂະນາດຂອງຊົງພຸ່ມ ຫວ່ານໃຫ້ທົ່ວຊົງພຸ່ມໃນຊ່ວງເດືອນກຸມພາ ຫຼື ເດືອນມີນາ (ໄລຍະນີ້ປຸ໋ຍດອກມັກຈະແຫ້ງ ແລະ ມີຄຸນນະພາບດີ ເນື່ອງຈາກຍ່ອຍສະຫຼາຍຢ່າງດີແລ້ວ.

## ການໃຫ້ປຸ໋ຍທາງໃບຂອງລຳໄຍ

ໃນບາງພື້ນທີ່ສະພາບດິນປູກລຳໄຍອາດມີບັນຫາ ຫຼືອາດເນື່ອງຈາກປັດໄຈສະພາບແວດລ້ອມອື່ນໆເຊັ່ນ ຝົນຕົກ ດິນມີຄວາມຊຸ່ມຊື່ນນ້ອຍ ການຈັດການນ້ຳບໍ່ດີ ເຮັດໃຫ້ການດູດທາດອາຫານຈາກດິນຂອງລຳໄຍບໍ່ໄດ້ດີເທົ່າທີ່ຄວນ ຫຼືບໍ່ພຽງພໍ ແລະ ທັນຕໍ່ຄວາມຕ້ອງການ ການໃຫ້ປຸ໋ຍທາງໃບແກ່ລຳໄຍຈຶ່ງເປັນແນວທາງສິ່ງທີ່ແກ້ບັນຫານີ້ໄດ້ ໂດຍສະເພາະຢ່າງຍິ່ງໃນໄລຍະກ່ອນການອອກດອກ ຊ່ວງເດືອນຕຸລາ ຈົນເຖິງເດືອນພະຈິກ ສະພາບລຳໄຍຄວນຈະຕ້ອງມີຄວາມສົມບູນ ກິ່ງກ້ານ ແລະ ໃບຄວນຈະແກ່ ແລະ ພ້ອມຕໍ່ກັບການສະສົມອາຫານສຳລັບການອອກດອກ ຫາກມີການແຕກໃບອ່ອນ ຫຼືອາຍຸໃບຍັງອ່ອນຈົນເກີນໄປ ອາດມີຜົນຕໍ່ການອອກດອກໃນປີນັ້ນໆ ໄດ້ ຈຶ່ງຄວນໃຊ້ປຸ໋ຍສູດ 0-52-34 ຫຼືສູດ 10-20-20 ຫຼື 10-20-10 ພົ່ນທາງໃບໃຫ້ທົ່ວເພື່ອໃຫ້ໃບໄດ້ຮັບທາດຟົດສຟໍຣັດ ແລະ ທາດໂປເຕຊຽມ ຢ່າງພຽງພໍເພື່ອເປັນການເລັ່ງໃຫ້ໃບລຳໄຍ ແກ່ໄວຂື້ນໄດ້, ປຸ໋ຍສູດ 0-52-34 ໃຊ້ໃນອັດຕາ 120 ກຼາມ / ນ້ຳ 20 ລິດ ພົ່ນໃຫ້ທົ່ວທັງຕົ້ນ 3 ຄັ້ງ ທຸກໆ 7 ວັນ ໃນກໍລະນີດິນທີ່ມີຄວາມອຸດົມສົມບູນສູງ ແລະ ຢູ່ໃນເຂດ ຊປທ, ສຳລັບໃນເຂດພື້ນທີ່ທີ່ອາໃສນ້ຳຝົນ ແລະ ດິນມີຄວາມອຸດົມສົມບູນຕ່ຳ ຄວນພົ່ນຈຳນວນ 5 ຄັ້ງ ໂດຍຈະພົ່ນໃນຊ່ວງເດືອນຕຸລາ ໃນຂະນະໃບລຳໄຍເກືອບຈະມີອາຍຸແກ່.

## ໂຣດ / ພະຍາດ ຂອງລຳໄຍ

ໂດຍທົ່ວໄປແລ້ວລຳໄຍເປັນພືດທີ່ປູກງ່າຍ ແລະ ຈະເລີນເຕີບໂຕໄດ້ດີຫາກມີສະພາບແວດລ້ອມທີ່ເໝາະສົມ ດິນທີ່ປູກຄວນຈະເປັນດິນຮ່ອມທີ່ມີການລະບາຍນ້ຳໄດ້ດີ ແລະ ມີອິນຊີວັດຖຸຫຼາຍ ເຖິງຢ່າງໃດກໍ່ຕາມການປູກລຳໄຍໃນປັດຈຸບັນຊາວກະສິກອນມັກປະສົບບັນຫາດ້ານພະຍາດຂອງລຳໄຍ ແລະ ແມງໄມ້ສັດຕູພືດຢູ່ສະເໝີ ສຳລັບບັນຫາເລື່ອງ ພະຍາດ / ໂຣດລຳໄຍມີດັ່ງນີ້:

### ໂຣດ Witches'Broom

ນັບວ່າເປັນໂຣດທີ່ສຳຄັນຊະນິດໜຶ່ງ ທີ່ສ້າງຄວາມເສຍຫາຍຕໍ່ການປູກລຳໄຍ ມັກພົບເຫັນຫຼາຍໃນລຳໄຍທີ່ມີອາຍຸແຕ່ 3 - 4 ປີຂື້ນໄປ ລຳໄຍທີ່ມັກເປັນໂຣດນີ້ມັກພົບເຫັນໃນບຳໄຍ ພັນປັບປຸງ ແລະ ລຳໄຍພັນພື້ນເມືອງ.

**ລັກສະນະອາການ**

ອາການທີ່ປະກົດຈາກລັກສະນະພາຍນອກ ຈະປະກົດເຫັນທີ່ສ່ວນຍອດ ແລະ ສ່ວນທີ່ເປັນຕາ ຊ່ວງທຳອິດໃບຍອດຈະແຕກມີລັກສະນະເປັນຝອຍບໍ່ປະປິ່ນໄປກັບໃບປົກກະຕິ ໃບ ແລະ ກິ່ງກ້ານທີ່ແຕກເປັນຝອຍຈະແຊງກະດ້າງ ຊີ້ໄປທາງດ້ານປາຍຂອງກິ່ງ ຫຼື ຊີ້ຂື້ນ ເມື່ອເຖິງຊ່ວງລະດູການອອກດອກ ຍອດທີ່ເປັນໂຣດຈະອອກຊໍ່ດອກຊະນິດຕິດໃບປົນກັບຕິດດອກເປັນຊໍ່ສັ້ນໆ ອາດຕິດໝາກໄດ້ 1 - 5 ໝາກ ກໍລະນີທີ່ເປັນໂຣດຢ່າງຮຸນແຮງໃບຍອດຈະແຕກມີລັກສະນະເປັນຝອຍ ເປັນຈຳນວນຫຼວງຫຼາຍ ຫຼືເປັນຝອຍທັງຍອດ ອາການໃບຍອດທີ່ເປັນພຸ່ມຝອຍຊີ້ໄປທາງບໍລິເວນສ່ວນປາຍກິ່ງມີລັກສະນະຄ້າຍກັບພອຍກວດເຮືອນນີ້ເອີ້ນວ່າ ໂຣດພອຍກວດເຮືອນ ເມື່ອລຳໄຍທີ່ເປັນໂຣດນີ້ຍັງຄົງໃຫ້ຜົນຜະລິດຢູ່ ແຕ່ເມື່ອອາການຂອງໂຣດຫາກຮຸນແຮງຫຼາຍກໍ່ຈະບໍ່ຕິດໝາກ / ໃຫ້ຜົນຜະລິດໄດ້ເລຍ ຫຼືອາດຈະເຮັດໃຫ້ຕົ້ນລຳໄຍຕາຍໃນທີ່ສຸດ.

**ການປ້ອງກັນ ແລະ ກຳຈັດ**

ຄັດເລືອກກິ່ງພັນປູກທີ່ມີກິ່ງຕອນ ຫຼື ກິ່ງຕາຈາກຕົ້ນແມ່ພັນທີ່ບໍ່ສະແດງອາການຂອງໂຣດດັ່ງກ່າວ ສຳລັບຕົ້ນທີ່ສະແດງອາການຂອງໂຣດຄວນທຳລາຍຖິ້ມ ແລະ ເຜົາທຳລາຍເພື່ອປ້ອງກັນການແຜ່ກະຈາຍຂອງໂຣດ ໄປຫາຕົ້ນທີ່ບໍ່ມີໂຣດ ຊຶ່ງເປັນວິທີການທີ່ດີທີ່ສຸດໃນປັດຈຸບັນ.

### ໂຣດຈຸດສີນ້ຳຕານ (Alqal Spot)

ໂຣດສີນ້ຳຕານພົບທົ່ວໄປໃນພື້ນທີ່ປູກລຳໄຍ ໂດຍສະເພາະໃນລະດູຝົນ ຊຶ່ງມີຄວາມຊຸ່ມສູງເໝາະແກ່ການເກີດໂຣດ ໂຣດນີ້ພົບເຫັນຫຼາຍໃນພືດຫຼາຍຊະນິດນອກຈາກລຳໄຍເຊັ່ນ: ທຸລຽນ ໝາກມ່ວງ ໝາກກ້ຽງ ຜ່າງນະວາ ລິ້ນຈີ່ ແລະ ໝາກເງາະເປັນຕົ້ນ.

**ລັກສະນະອາການ**

ອາການເລີ່ມຕົ້ນທີ່ພົບເຫັນເທິງໃບລຳໄຍ ຈະເປັນຈຸດນ້ອຍໆ ນູນຂື້ນຕາມຜິວໃບດ້ານເທິງເລັກນ້ອຍ ຂອບຂອງຈຸດບໍ່ລຽບມີລັກສະນະເປັນແສກໆ ສີຂ້ອນຂ້າງຂຽວປົນເທົາເກີດຂື້ນກະແຈກກະຈາຍເທິງຜິວຂອງໃບດ້ານເທິງທີ່ຖືກກັບແສງແດດ ຕໍ່ມາຈຸດນ້ອຍໆເຫຼົ່ານີ້ຈະຂະຫຍາຍໃຫຍ່ຂື້ນໃນສະພາບທີ່ມີຄວາມຊຸ່ມສູງ **ແລະ** ໄດ້ຮັບແສງແດດພຽງພໍ ເມື່ອເກີດອາການຢ່າງຮຸນແຮງບໍລິເວນກິ່ງກ້ານຈະແຫ້ງ ແລະ ຕາຍໃນທີ່ສຸດ.

**ການປ້ອງກັນ ແລະ ຈຳກັດ**

ໃນບໍລິເວນ / ພື້ນທີ່ທີ່ປູກລຳໄຍ ຫາກມີການພົ່ນສານກຳຈັດ / ປ້ອງກັນໂຣດຢ່າງສະໝໍ່າສະເໝີ **ມັກຈະ**ບໍ່ຄ່ອຍພົບເຫັນການລະບາດຂອງໂຣດນີ້ ສານປ້ອງກັນກຳຈັດໂຣດພືດ ທີ່ເປັນສານປະກອບທອງແດງ **ກໍ່າ**ສາມາດປ້ອງກັນກຳຈັດໂຣດຊະນິດນີ້ໄດ້ດີເຊັ່ນກັນ ເຊັ່ນ: Copper Oxychloride ແລະ Bordeaux **mixture** ເປັນຕົ້ນ.